ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----------------------

ລັດວິສະຫະກິດປະສົມ ລາວໂທລະຄົມມະນາຄົມ

ພະແນກການຕະຫຼາດ                                        ເລກທີ່:______/ກຕຫຼ

ນະຄອນຫຼວງວຽງຈັນ, ວັນທີ່:________

# ສັນຍາບໍລິການ

## ວ່າດ້ວຍການເປັນຕົວແທນຈຳໜ່າຍ ສິນຄ້າຂອງ ລາວ ໂທລະຄົມ

**ລະຫວ່າງ:**

ລັດວິສະຫະກິດປະສົມ ລາວ ໂທລະຄົມມະນາຄົມ, ຕາງໜ້າໂດຍ ພະແນກການຕະຫຼາດ ສຳນັກງານຕັ້ງຢູ່: ຖະໜົນສາຍລົມ, ບ້ານ ຫັດສະດີ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ໂທລະສັບ: (021) 214488, ແຟັກ: (021) 217485.

ຊຶ່ງຕໍ່ໄປເອີ້ນວ່າ: **ລາວ ໂທລະຄົມ**

**ແລະ**

ທ່ານ:___________________________________, ວັນເດືອນປີເກີດ:________________.

ທີ່ຢູ່ປະຈຸບັນບ້ານ:_____________________, ໜ່ວຍ:__________, ເມືອງ:______________

ແຂວງ:___________________________, ເບີໂທຕິດຕໍ່:_____________________________

ຊື່ງເປັນເຈົ້າຂອງຮ້ານ:_______________, ລັກສະນະຂອງຮ້ານຂາຍ:__________________

ຕັ້ງຢູ່ບ້ານ:_________________________, ເມືອງ:______________________________

ແຂວງ:__________________________, ເບີໂທຕິດຕໍ່ຮ້ານ:___________________________

ຊຶ່ງຕໍ່ໄປເອີ້ນວ່າ: **ຕົວແທນຈຳໜ່າຍ (Dealer)**

**ໂດຍມີເລກລະຫັດສະມະຊິກຕົວແທນຈຳໜ່າຍຄື:**________________.

- ອີງຕາມກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາແຫ່ງ ສປປ ລາວ.
- ເພື່ອເປັນບ່ອນໃນການຈັດຕັ້ງປະຕິບັດ ເງື່ອນໄຂຂອງສັນຍາສະບັບນີ້ ຄູ່ສັນຍາທັງສອງຝ່າຍ ຈຶ່ງໄດ້ຕົກລົງເປັນເອກະພາບກັນ ເຮັດສັນຍາສະບັບນີ້ຂຶ້ນ ເພື່ອປົກປັກສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງທັງສອງຝ່າຍຕາມກົດໝາຍ.

**ມາດຕາ 1: <u>ຈຸດປະສົງ</u>**

ລາວ ໂທລະຄົມ ມີຄວາມປະສົງທີ່ຈະຈຳໜ່າຍສິນຄ້າ ຂອງ ລາວ ໂທລະຄົມ ຊຶ່ງລວມທັງ ໜ່ວຍໂທລະສັບ, ຊິມເບີໂທລະສັບ, ບັດມູນຄ່າໂທຂອງບໍລິການຕ່າງໆ, ສາຍເຊື່ອມຕໍ່ອິນເຕີເນັດ (USB) ຂອງ ລາວ ໂທລະຄົມ ໃຫ້ໄດ້ໄວ ເພື່ອໄວ້ຕອບສະໜອງ ຄວາມຕ້ອງການຂອງຊົມໃຊ້ ບໍລິການ ໂດຍຜ່ານຊ່ອງທາງການຈັດຈຳໜ່າຍ ແລະ ຕົວແທນຈຳໜ່າຍ ທີ່ມີຄວາມປະສົງຢາກ ຈຳໜ່າຍສິນຄ້າ ລາວ ໂທລະຄົມໃຫ້ແກ່ຜູ້ຊົມໃຊ້ບໍລິການ ພາຍໃຕ້ຂໍ້ຕົກລົງ ໄດ້ເຮັດສັນຍາສະບັບ ນີ້ຂຶ້ນ ເພື່ອເປັນແນວທາງປະຕິບັດຮ່ວມກັນ ທັງສອງຝ່າຍ.

**ມາດຕາ 2: <u>ສິດຂອງລາວ ໂທລະຄົມ</u>**

2.1 ລາວ ໂທລະຄົມ ຈະເປັນຜູ້ກຳນົດລາຄາຂອງສິນຄ້າ ເປັນແຕ່ປະເພດສິນຄ້າ ແລະ ແຈ້ງໃຫ້ຕົວແທນຈຳໜ່າຍເປັນແຕ່ລະໄລຍະ ລວມເຖິງເງື່ອນໄຂຕ່າງໆ (ຖ້າມີ).

2.2 ລາວ ໂທລະຄົມ ຈະເປັນຜູ້ພິຈາລະນາຄັດເລືອກ ຕົວແທນຈຳໜ່າຍທີ່ເໝາະສົມ.

2.3 ລາວ ໂທລະຄົມ ມີສິດກ່າວເຕືອນຕົວແທນຈຳໜ່າຍທີ່ເຫັນວ່າ ມີການລະເມີດຂໍ້ຕົກ ລົງໃນສັນຍາ, ບໍ່ວ່າຈະເປັນທາງກົງ ຫຼື ທາງອ້ອມ.

2.4 ລາວ ໂທລະຄົມ ຈະເປັນຜູ້ຮັບ ທຸກຄຳຮ້ອງຂອງຕົວແທນຈຳໜ່າຍ ເພື່ອພິຈາລະນາ ແນວທາງແກ້ໄຂຮ່ວມກັນ.

2.5 ລາວ ໂທລະຄົມ ມີສິດຍົກເລີກສັນຍາສະບັບນີ້ໄດ້, ຖ້າເຫັນວ່າຕົວແທນຈຳໜ່າຍບໍ່ປະ ຕິບັດຕາມສັນຍາສະບັບນີ້ ແລະ ຈະແຈ້ງໃຫ້ຄູ່ສັນຍາຊາບ ຢ່າງເປັນລາຍລັກອັກສອນ ລ່ວງໜ້າ 15 ວັນ ຕາມວັນລັດສະການ.

**ມາດຕາ 3: <u>ພັນທະຂອງລາວ ໂທລະຄົມ</u>**

3.1 ລາວ ໂທລະຄົມ ຈະຂາຍສິນຄ້າທີ່ມີຄຸນນະພາບດີ ແລະ ເປັນສິນຄ້າໃໝ່ ຕາມລາຄາ ທີ່ ລາວ ໂທລະຄົມ ກຳນົດອອກ ໃຫ້ແກ່ຕົວແທນຈຳໜ່າຍ.

3.2 ລາວ ໂທລະຄົມ ຈະເຮັດ “ ບັດປະຈຳຕົວການເປັນຕົວແທນຈຳໜ່າຍຂອງ ລາວ ໂທລະຄົມ “ ໃຫ້ແກ່ຕົວແທນຈຳໜ່າຍ ເພື່ອໃຊ້ອ້າງອີງໃນການພົວພັນຊື້ສິນຄ້າ.

3.3 ລາວ ໂທລະຄົມ ຈະໃຫ້ການສະໜັບສະໜູນ ແລະ ສົ່ງເສີມການຂາຍສິນຄ້າຕາມ ສົມຄວນ, ລວມເຖິງໃຫ້ຄຳແນະນຳໃນການຈຳໜ່າຍ, ການແນະນຳວິທີການນຳໃຊ້, ກຳນົດ ແລະ ລະບຽບການໃນການໃຫ້ບໍລິການ, ຊ່ວຍແກ້ໄຂບັນຫາ ແລະ ທັງເປັນການສະໜັບສະໜູນ ດ້ານ ວັດຖຸສົ່ງເສີມການຂາຍ ໃຫ້ແກ່ຕົວແທນຈຳໜ່າຍ ຕາມຄວາມເໝາະສົມ.

3.4 ລາວ ໂທລະຄົມ ຮັບປະກັນສິນຄ້າຕາມເງື່ອນໄຂ ແລະ ມາດຕະຖານທີ່ ລາວ ໂທລະຄົມ ວາງອອກ.

**ມາດຕາ 4: <u>ສິດຂອງຕົວແທນຈຳໜ່າຍ</u>**

4.1 ຕົວແທນຈຳໜ່າຍ ມີສິດເລືອກສັ່ງຊື້ສິນຄ້າຂອງ ລາວ ໂທລະຄົມ ໄດ້ຕາມຕ້ອງການ ຕາມການແຈ້ງການ ກຳນົດລາຄາທີ່ ລາວ ໂທລະຄົມ ໄດ້ວາງອອກໃນແຕ່ລະໄລຍະເວລາ.

4.2 ຕົວແທນຈຳໜ່າຍມີສິດໃຊ້ກາໝາຍ (Logo), ຊື່ບໍລິການ (Service Name) ແລະ ຄຳຂວັນ (Slogan) ຕ່າງໆ ຂອງສິນຄ້າ ແລະ ຜະລິດຕະພັນທີ່ເປັນຂອງ ລາວ ໂທລະຄົມ ເພື່ອໃຊ້ໃນການໂຄສະນາປະຊາສຳພັນ ໃນການຂາຍສິນຄ້າ-ບໍລິການ ລາວ ໂທລະຄົມ ຕະຫຼອດໄລຍະເວລາຂອງອາຍຸສັນຍາ ແຕ່ຕ້ອງຮັບປະກັນ ບໍ່ໃຫ້ເກີດຄວາມເສຍຫາຍ ຕໍ່ຊື່ສຽງ ແລະ ພາບພົດ ຂອງ ລາວ ໂທລະຄົມ.

4.3 ຕົວແທນຈຳໜ່າຍມີສິດສອບຖາມ ເອົາຂໍ້ມູນຕ່າງໆ ກ່ຽວກັບສິນຄ້າຈາກລາວ ໂທລະຄົມ.

4.4 ຕົວແທນຈຳໜ່າຍມີສິດຍົກເລີກສັນຍາກ່ອນ ແລະ ແຈ້ງໃຫ້ ລາວ ໂທລະຄົມ ຮັບຊາບຢ່າງເປັນລາຍລັກອັກສອນ ລ່ວງໜ້າກ່ອນ 15 ວັນ ຕາມວັນລັດຖະການ.

**ມາດຕາ 5: <u>ພັນທະຂອງຕົວແທນຈຳໜ່າຍ</u>**

5.1 ຕົວແທນຈຳໜ່າຍ ຕ້ອງໄດ້ຮັບຜິດຊອບໃນການຂົນສົ່ງສິນຄ້າ, ການຄຸ້ມຄອງດູແລຮັກສາສິນຄ້າທີ່ຊື້ໄປ ໃຫ້ຢູ່ໃນສະຖານທີ່ທີ່ເໝາະສົມ ແລະ ປອດໄພ, ໂດຍໃຊ້ຄ່າໃຊ້ຈ່າຍຕ່າງໆຂອງຕົວແທນຈຳໜ່າຍເອງ.

5.2 ຕົວແທນຈຳໜ່າຍຕ້ອງເປັນຜູ້ມາຊື້ສິນຄ້າ ລາວ ໂທລະຄົມ ດ້ວຍຕົນເອງ ແລະ ໃນການມາຊື້ສິນຄ້າ ລາວ ໂທລະຄົມ ໃນແຕ່ລະຄັ້ງນັ້ນ ຈະຕ້ອງໄດ້ນຳເອົາບັດສະມາຊິກການເປັນຕົວແທນຈຳໜ່າຍ ລາວ ໂທລະຄົມ ຂອງຕົນມາພ້ອມ.

5.3 ຕົວແທນຈຳໜ່າຍຕ້ອງກວດກາເບິ່ງສິນຄ້າທີ່ໄດ້ຊື້ ຈາກ ລາວ ໂທລະຄົມ ໃຫ້ລະອຽດ ແລະ ຄົບຖ້ວນ ກ່ອນຈະອອກຈາກ ລາວ ໂທລະຄົມ ທາງນີ້ກໍ່ເພື່ອຫຼີກເວັ້ນບັນຫາການຕົກເຮ່ຍເສຍຫາຍ.

5.4 ຕົວແທນຈຳໜ່າຍ ຕ້ອງຮັບຜິດຊອບໃນການເສຍພັນທະ, ພາສີ ແລະ ອື່ນໆ ທີ່ເກີດຂື້ຈາກການຈຳໜ່າຍ ຂອງຕົວແທນຈຳໜ່າຍເອງ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ.

5.5 ຫ້າມຕົວແທນຈຳໜ່າຍ ຍາກຈຳໜ່າຍຂອງສົມມະນາບຸນຄຸນ ໃຫ້ແກ່ລູກຄ້າທີ່ຊື້ສິນຄ້າ.

5.6 ຕົວແທນຈຳໜ່າຍມີໜ້າທີ່ໃຫ້ຄວາມສະດວກຕໍ່ ລາວ ໂທລະຄົມ ໃນການໃຫ້ຂໍ້ມູນທີ່ເປັນປະໂຫຍດ ແລະ ຍັງມີສິດສະເໜີ ແລະ ປະກອບຄຳເຫັນ ຕໍ່ການປັບປຸງການບໍລິການຂອງ ລາວ ໂທລະຄົມ ໃຫ້ດີຂື້ນ ບົນພື້ນຄວາມຮັກແພງຈິງໃຈ ລະຫວ່າງກັນທັງສອງຝ່າຍ.

5.7 ຕົວແທນຈຳໜ່າຍ ຕ້ອງຮັບຜິດຊອບໃນການບໍລິການລູກຄ້າ ລວມເຖິງການເຜີຍແຜ່ໂຄສະນາ ປະຊາສຳພັນຂ່າວສານຕ່າງໆ ເພື່ອເປັນການຊຸກຍູ້ການຈຳໜ່າຍສິນຄ້າໃຫ້ໄດ້ຕາມເປົ້າໝາຍທີ່ວາງອອກ.

5.8 ຫ້າມຕົວແທນຈຳໜ່າຍປ່ຽນແປງ, ເສີມຂະຫຍາຍ ຫຼື ດັດແກ້ເຄື່ອງໝາຍ(Logo), ຊື່ບໍລິການ(Service Name) ແລະ ຄຳຂວັນ(Slogan) ຂອງ ລາວ ໂທລະຄົມໂດຍບໍ່ໄດຮັບອະນຸຍາດຈາກ ລາວ ໂທລະຄົມ.

5.9 ຫ້າມຕົວແທນຈຳໜ່າຍເປີດເຜີຍຂໍ້ມູນ ແລະ ຄວາມລັບຂອງ ລາວ ໂທລະຄົມ ໃຫ້ແກ່ບຸກຄົນທີ່ສາມ ໂດຍບໍ່ໄດ້ຮັບອະນຸຍາດ ທີ່ເປັນລາຍລັກອັກສອນຈາກ ລາວ ໂທລະຄົມ.

5.10 ສິນຄ້າທີ່ຕົວແທນຈຳໜ່າຍຊື້ຈາກ ລາວ ໂທລະຄົມ ໄປແລ້ວ, ຕົວແທນຈຳໜ່າຍຕ້ອງມີຄວາມຮັບຜິດຊອບຕໍ່ການຈຳໜ່າຍ ສິນຄ້າເຫຼົ່ານັ້ນ ໃຫ້ເຖິງຜູ້ຊົມໃຊ້.

**ມາດຕາ 6: <u>ເງື່ອນໄຂການສັ່ງຊື້</u>**

6.1 ໃນການສັ່ງຊື້ເປັນຈຳນວນຫຼາຍ ຕົວແທນຈຳໜ່າຍສົ່ງໃບສັ່ງຊື້ ຫຼ ໂທລະສັບມາສັ່ງຊື້ນຳ ລາວ ໂທລະຄົມ ລ່ວງໜ້າໜ້ອຍ 02 ຊົ່ວໂມງ ກ່ອນເຂົ້າມາຮັບສິນຄ້າ ທັງນີ້ກໍ່ເພື່ອໃຫ້ພະນັກງານຂາຍຂອງ ລາວ ໂທລະຄົມ ໄດ້ຈັດກຽມສິນຄ້າ ແລະ ທັງເປັນການຫຼຸດຜ່ອນເວລາລໍຖ້າຂອງຕົວແທນຈຳໜ່າຍ.

6.2 <u>ການຊຳລະເງິນ:</u> ຕ້ອງຊຳລະເປັນເງິນສົດ ໃນວັນທີ່ມາຮັບສິນຄ້າຕາມລະບຽບ ຂອງການເງິນ ລາວ ໂທລະຄົມ ກຳນົດອອກ.

**ມາດຕາ 7: <u>ການຍົກເລີກສັນຍາ</u>**

7.1 ຫາກຝ່າຍໃດຝ່າຍໜຶ່ງ ບໍ່ປະຕິບັດຕາມຂໍ້ກຳນົດໃນສັນຍາສະບັບນີ້ ແລະ ບໍ່ໄດ້ມີການແກ້ໄຂ ຝ່າຍກົງກັນຂ້າມມີສິດສະເໜີຕໍ່ຝ່າຍລະເມີດ ໃຫ້ຍົກເລີກສັນຍາໄດ້, ໂດຍແຈ້ງເປັນລາຍລັກອັກສອນ ໃຫ້ອີກຝ່າຍໜຶ່ງຮັບຊາບລ່ວງໜ້າພາຍໃນ 15 ວັນ, ພ້ອມດຽວກັນນີ້ ຝ່າຍທີ່ລະເມີດສັນຍາ ຈະຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍ ທີ່ເປັນຜົນມາຈາກການທີ່ບໍ່ໄດ້ປະຕິບັດຕາມສັນຍາ.

7.2 ຫາກຝ່າຍໃດຝ່າຍໜຶ່ງມີຄວາມປະສົງ ຈະຍົກເລີກສັນຍາ ໃຫ້ແຈ້ງເປັນລາຍລັກອັກສອນໃຫ້ອີກຝ່າຍໜຶ່ງ ຮັບຊາບລ່ວງໜ້າກ່ອນ 15 ວັນ ຕາມວັນລັດສະການ.

**ມາດຕາ 8: <u>ການແກ້ຂໍ້ຂັດແຍ່ງ</u>**

ຫາກມີຂໍ້ຂັດແຍ່ງ, ຂໍ້ຜິດຜາດໃດໜຶ່ງເກີດຂຶ້ນລະຫວ່າງຄູ່ສັນຍາ, ຍິນດີຖືກເອົາການປຶກສາຫາລື ເພື່ອຫາທາງອອກອັນເໝາະສົມຮ່ວມກັນ ດ້ວຍຄວາມເຂົ້າອົກເຂົ້າໃຈຊຶ່ງກັນ ແລະ ກັນ. ບົນພື້ນຖານຍຶດຖືຕາມເນື້ອໃນສັນຍາເປັນຫຼັກ. ຄຳຕັກສິນສຸດທ້າຍຂອງຄະນະອຳນວຍການໃຫຍ່ ລາວ ໂທລະຄົມ ຖືວ່າເປັນຄຳຕັດສິນໃຊ້ໄດ້ເດັດຂາດ.

**ມາດຕາ 9: ຜົນບັງຄັບໃຊ້ສັນຍາ**

9.1 ສັນຍາສະບັບນີ້ ໄດ້ເຮັດຂຶ້ນເປັນສອງສະບັບ ແລະ ເຮັດເປັນພາສາລາວ ຊຶ່ງມີເນື້ອໃນ ແລະ ເງື່ອນໄຂອັນດຽວກັນ, ທັງສອງຝ່າຍອ່ານ ແລະ ຮັບຮູ້ເປັນເອກະພາບກັນ ຈຶ່ງພ້ອມລົງລາຍເຊັນ ໄວ້ເປັນຫຼັກຖານ.

9.2 ສັນຍາສະບັບນີ້ ເຮັດຂຶ້ນດຽວຄວາມພໍໃຈຂອງທັງສອງຝ່າຍ.

9.3 ສັນຍາສະບັບນີ້ ມີຜົນບັງຄັບໃຊ້ນັບຕັ້ງແຕ່ມື້ ທັງສອງຝ່າຍລົງລາຍເຊັນຮ່ວມກັນເປັນຕົ້ນໄປ.

| ລັດວິສາຫະກິດປະສົມ ລາວ ໂທລະຄົມມະນາຄົມ<br>(ພະແນກການຕະຫລາດ) | ຕົວແທນຈຳໜ່າຍ (Dealer) |
|---|---|
| ______________________ | ______________________ |
| ຊື່ແຈ້ງ: ______________________ | ຊື່ແຈ້ງ: ______________________ |
| ວັນທີ່: ______________________ | ວັນທີ່: ______________________ |

ເອກະສານປະກອບສັນຍາ:

- ສຳເນົາບັນທະບຽນວິສາຫະກິດ ຫຼື ປະຕັງຮ້ານ: 01 ສະບັບ.
- ໃບຢັ້ງຢືນທີ່ຢູ່ / ສຳເນົາບັດປະຈຳຕົວຂອງຜູ້ສະໝັກ: 01 ສະບັບ.
- ແຜນວາດທີ່ຕັ້ງຂອງຮ້ານ:

ສຳເນົາ:
- ພະແນກບັນຊີ 01 ສະບັບ.
- ພະແນກການເງິນ 01 ສະບັບ.
- ຄະນະນິຕິກຳ 01 ສະບັບ.